**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ທະນາຄານແຫ່ງ ສປປ ລາວ ເລກທີ 1225/ທຫລ

ນະຄອນຫຼວງວຽງຈັນ, ວັນທີ 21 ທັນວາ 2023

# ຂໍ້ຕົກລົງ
# ວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ
# ກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ (ສະບັບປັບປຸງ) ສະບັບເລກທີ 47/ສພຊ, ລົງວັນທີ 19 ມິຖຸນາ 2018;
- ອີງຕາມ ກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາຕ່າງປະເທດ (ສະບັບປັບປຸງ) ສະບັບເລກທີ 15/ສພຊ, ລົງວັນທີ 07 ກໍລະກົດ 2022;
- ອີງຕາມ ຄຳສັ່ງວ່າດ້ວຍການຈັດຕັ້ງປະຕິບັດການຄຸ້ມຄອງເງິນຕາຕ່າງປະເທດ ສະບັບເລກທີ 10/ນຍ, ລົງວັນທີ 14 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ ຕົກລົງ:**

## ໝວດທີ 1
## ບົດບັນຍັດທົ່ວໄປ

**ມາດຕາ 1 ຈຸດປະສົງ**

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອອຳນວຍຄວາມສະດວກ ແລະ ຕິດຕາມກະແສເງິນລົງທຶນ ແນໃສ່ຊຸກຍູ້ສົ່ງເສີມການລົງທຶນໂດຍກົງຈາກຕ່າງປະເທດໃຫ້ມີປະສິດທິຜົນ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ-ສັງຄົມ.

**ມາດຕາ 2 ການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ**

ການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ແມ່ນການຈັດຕັ້ງປະຕິບັດບັນດາຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບ ການເປີດ ແລະ ນຳໃຊ້ບັນຊີເງິນຝາກກ່ຽວກັບການລົງທຶນ, ການນຳທຶນເຂົ້າ-ອອກ ສປປ ລາວ ໃຫ້ສອດຄ່ອງກັບກົດໝາຍວ່າດ້ວຍການຄຸ້ມຄອງເງິນຕາ

ຕ່າງປະເທດ, ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍວິສາຫະກິດ ແລະ ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 3 ການອະທິບາຍຄຳສັບ**

ຄຳສັບທີ່ນຳໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຜູ້ລົງທຶນຕ່າງປະເທດ** ໝາຍເຖິງ ບຸກຄົນ ຫຼື ນິຕິບຸກຄົນ ຕ່າງປະເທດ ທີ່ເຂົ້າມາລົງທຶນ ແລະ ຈົດທະບຽນດຳເນີນທຸລະກິດຕາມກົດໝາຍຂອງ ສປປ ລາວ;

2. **ການລົງທຶນໂດຍກົງຈາກຕ່າງປະເທດ** ໝາຍເຖິງ ການນຳທຶນເຂົ້າມາດຳເນີນທຸລະກິດຢູ່ ສປປ ລາວ ຂອງຜູ້ລົງທຶນຕ່າງປະເທດ ທີ່ມີການຖືຮຸ້ນນັບແຕ່ ສິບສ່ວນຮ້ອຍຂຶ້ນໄປ ໃນຮູບການລົງທຶນຝ່າຍດຽວ ຫຼື ລົງທຶນຮ່ວມກັບພາກລັດ, ລັດວິສາຫະກິດ ຫຼື ເອກະຊົນພາຍໃນ;

3. **ບັນຊີເງິນຝາກກ່ຽວກັບການລົງທຶນ** ໝາຍເຖິງ ບັນຊີເງິນຝາກສະເພາະທີ່ເປີດນຳທະນາຄານທຸລະກິດ ເພື່ອຮອງຮັບການເຄື່ອນໄຫວທຸລະກຳທາງດ້ານການເງິນ ທີ່ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ;

4. **ບັນຊີເງິນຝາກເພື່ອກະກຽມການລົງທຶນ** ໝາຍເຖິງ ບັນຊີເງິນຝາກຂອງ ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ເປີດນຳທະນາຄານທຸລະກິດ ເພື່ອຮອງຮັບການໂອນເງິນໃນໄລຍະລໍຖ້າໄດ້ຮັບໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;

5. **ທະນາຄານທຸລະກິດ** ໝາຍເຖິງ ທະນາຄານທຸລະກິດຢູ່ ສປປ ລາວ ຊຶ່ງໃຫ້ບໍລິການເປີດ ແລະ ດຳເນີນທຸລະກຳ ທີ່ຕິດພັນກັບບັນຊີເງິນຝາກເພື່ອກະກຽມການລົງທຶນ ແລະ/ຫຼື ບັນຊີເງິນຝາກກ່ຽວກັບການລົງທຶນ.

**ມາດຕາ 4 ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ບຸກຄົນ ແລະ ນິຕິບຸກຄົນ ຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາລົງທຶນຢູ່ ສປປ ລາວ, ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານທຸລະກິດ.

## ໝວດທີ 2
## ການເປີດບັນຊີເງິນຝາກເພື່ອກະກຽມການລົງທຶນ ແລະ ບັນຊີເງິນຝາກກ່ຽວກັບການລົງທຶນ

**ມາດຕາ 5 ການເປີດບັນຊີເງິນຝາກເພື່ອກະກຽມການລົງທຶນ**

ກ່ອນທີ່ຈະໄດ້ຮັບໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ, ບຸກຄົນ ຫຼື ນິຕິບຸກຄົນຕ່າງປະເທດ ທີ່ມີຈຸດປະສົງເຂົ້າມາລົງທຶນຢູ່ ສປປ ລາວ ສາມາດສະເໜີຂໍເປີດບັນຊີເງິນຝາກເພື່ອກະກຽມການລົງທຶນ ນຳທະນາຄານທຸລະກິດ ແລະ ໂອນເງິນເຂົ້າບັນຊີເງິນຝາກດັ່ງກ່າວ ເພື່ອນຳໃຊ້ເຂົ້າໃນການຊຳລະຢູ່ ສປປ ລາວ ເປັນຕົ້ນ ຄ່າເຊົ່າພາຫະນະ, ຄ່າທີ່ພັກ, ຄ່າເຊົ່າສຳນັກງານ ແລະ ຄ່າເດີນທາງ, ຄ່າທຳນຽມ ແລະ ຄ່າທີ່ປຶກສາ ທີ່ຕິດພັນກັບການຂໍອະນຸຍາດລົງທຶນ, ການຂໍສ້າງຕັ້ງວິສາຫະກິດ ແລະ ການຂໍອະນຸຍາດດຳເນີນທຸລະກິດ.

ເອກະສານເພື່ອຂໍເປີດບັນຊີເງິນຝາກເພື່ອກະກຽມການລົງທຶນ ມີດັ່ງນີ້:

1. ຫຼັກຖານການຍື່ນໜັງສືເຈດຈຳນົງຂໍລົງທຶນ ຫຼື ຂໍສ້າງຕັ້ງວິສາຫະກິດ ນຳຂະແໜງການທີ່ກ່ຽວຂ້ອງ;

2. ໃບທະບຽນວິສາຫະກິດ ແລະ/ຫຼື ໜັງສືຢັ້ງຢືນການມີຕົວຕົນ ຂອງນິຕິບຸກຄົນຕ່າງປະເທດ ຈາກອົງການທີ່ກ່ຽວຂ້ອງຂອງຕ່າງປະເທດ;

3. ໃບມອບສິດໃຫ້ບຸກຄົນ ຫຼື ຜູ້ຕາງໜ້າ ໃນການເປີດບັນຊີເງິນຝາກດັ່ງກ່າວ;

4. ໜັງສືເດີນທາງ (Passport) ຂອງຜູ້ທີ່ໄດ້ຮັບມອບສິດ;

5. ເອກະສານອື່ນ ທີ່ກົມຄຸ້ມຄອງເງິນຕາຕ່າງປະເທດ ແລະ ທະນາຄານທຸລະກິດ ເຫັນວ່າຈຳເປັນ.

**ມາດຕາ 6 ການເປີດບັນຊີເງິນຝາກກ່ຽວກັບການລົງທຶນ**

ຜູ້ລົງທຶນຕ່າງປະເທດ ຕ້ອງເປີດບັນຊີເງິນຝາກກ່ຽວກັບການລົງທຶນ ນຳທະນາຄານທຸລະກິດແຫ່ງໜຶ່ງ ເປັນສະກຸນເງິນກີບ ແລະ ເງິນຕາຕ່າງປະເທດ ພາຍໃນເວລາ ສິບຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ ເປັນຕົ້ນໄປ ແລະ ຕ້ອງດຳເນີນທຸກທຸລະກຳທາງດ້ານການເງິນ ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ ຜ່ານບັນຊີເງິນຝາກດັ່ງກ່າວເທົ່ານັ້ນ ເປັນຕົ້ນ ການນຳທຶນເຂົ້າມາ ສປປ ລາວ, ການໂອນກຳໄລ, ເງິນປັນຜົນ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ໄປຕ່າງປະເທດ. ສຳລັບຜູ້ລົງທຶນຕ່າງປະເທດ ທີ່ລົງທຶນໃນສະຖາບັນການເງິນ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງທະນາຄານແຫ່ງ ສປປ ລາວ ໃຫ້ປະຕິບັດຕາມລະບຽບການທີ່ກ່ຽວຂ້ອງ.

ເອກະສານເພື່ອຂໍເປີດບັນຊີເງິນຝາກກ່ຽວກັບການລົງທຶນ ມີດັ່ງນີ້:

1. ໃບຄຳຮ້ອງຕາມແບບພິມຂອງທະນາຄານທຸລະກິດ;
2. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);
4. ເອກະສານອື່ນ ຕາມການກຳນົດຂອງທະນາຄານທຸລະກິດ.

ຜູ້ລົງທຶນຕ່າງປະເທດ ທີ່ໄດ້ນຳໃຊ້ບັນຊີເງິນຝາກທົ່ວໄປເຂົ້າໃນການດຳເນີນທຸລະກຳ ທີ່ຕິດພັນກັບການລົງທຶນໂດຍກົງຈາກຕ່າງປະເທດ ກ່ອນຂໍ້ຕົກລົງສະບັບນີ້ມີຜົນສັກສິດ ຕ້ອງສະເໜີຕໍ່ທະນາຄານທຸລະກິດ ເພື່ອຫັນບັນຊີເງິນຝາກດັ່ງກ່າວ ເປັນບັນຊີເງິນຝາກກ່ຽວກັບການລົງທຶນ.

ຜູ້ລົງທຶນຕ່າງປະເທດ ທີ່ຍ້າຍບັນຊີເງິນຝາກກ່ຽວກັບການລົງທຶນໄປເປີດຢູ່ທະນາຄານທຸລະກິດແຫ່ງໃໝ່ ຕ້ອງໂອນເງິນທັງໝົດທີ່ມີຢູ່ໃນບັນຊີເງິນຝາກດັ່ງກ່າວ ເຂົ້າບັນຊີເງິນຝາກກ່ຽວກັບການລົງທຶນ ທີ່ເປີດຢູ່ທະນາຄານທຸລະກິດແຫ່ງໃໝ່ ແລະ ປິດບັນຊີເງິນຝາກເກົ່າ ພ້ອມທັງແຈ້ງໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນເວລາ ສິບ ວັນລັດຖະການ ນັບແຕ່ວັນທີ່ໄດ້ເປີດບັນຊີເງິນຝາກດັ່ງກ່າວຢູ່ທະນາຄານທຸລະກິດແຫ່ງໃໝ່.

**ມາດຕາ 7 ການແລກປ່ຽນເງິນຕາໃນບັນຊີເງິນຝາກກ່ຽວກັບການລົງທຶນ**

ຜູ້ລົງທຶນຕ່າງປະເທດ ທີ່ມີຈຸດປະສົງນຳໃຊ້ເງິນໃນບັນຊີເງິນຝາກກ່ຽວກັບການລົງທຶນ ເພື່ອຊຳລະຢູ່ພາຍໃນ ສປປ ລາວ ເປັນຕົ້ນ ຄ່າສິນຄ້າ, ຄ່າບໍລິການ, ໜີ້ສິນ, ເງິນປັນຜົນ, ເບີກຈ່າຍເງິນເດືອນ ຫຼື ຄ່າແຮງງານ ຕ້ອງແລກປ່ຽນເງິນຕາຕ່າງປະເທດມາເປັນເງິນກີບ ນຳລະບົບທະນາຄານ ແລະ ຕ້ອງຮັກສາເອກະສານຢັ້ງຢືນການແລກປ່ຽນນັ້ນ ເພື່ອຕິດຕາມ ກວດກາ.

## ໝວດທີ 3
## ການຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ
## ແລະ ການນຳທຶນກັບຄືນປະເທດ

**ມາດຕາ 8 ໂຄງປະກອບຂອງທຶນ**

ທຶນທີ່ປະກອບເຂົ້າໃນການລົງທຶນໂດຍກົງຢູ່ ສປປ ລາວ ປະກອບດ້ວຍ ທຶນມີເອງຂອງຂາຮຸ້ນ ທີ່ໄດ້ຈາກທຶນຈົດທະບຽນ ແລະ/ຫຼື ການອອກຮຸ້ນທຶນ ແລະ ໜີ້ສິນ ທີ່ໄດ້ຈາກການກູ້ຢືມທາງກົງຈາກທະນາຄານທຸລະກິດ ແລະ/ຫຼື ພາກສ່ວນອື່ນ ແລະ ການກູ້ຢືມທາງອ້ອມ ເປັນຕົ້ນ ການອອກຮຸ້ນກູ້ ແລະ ຕາສານໜີ້.

ຜູ້ລົງທຶນຕ່າງປະເທດ ຕ້ອງລາຍງານໂຄງປະກອບຂອງທຶນ ໃຫ້ທະນາຄານແຫ່ງ ສປປ ລາວ ເມື່ອມີການສະເໜີຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຄັ້ງທຳອິດ ແລະ ລາຍງານທຸກຄັ້ງທີ່ມີການປັບປຸງໂຄງປະກອບຂອງທຶນໃນລະດັບ ຫ້າສ່ວນຮ້ອຍ ຂຶ້ນໄປ.

**ມາດຕາ 9 ການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ**

ຜູ້ລົງທຶນຕ່າງປະເທດ ຕ້ອງນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຄົບຕາມຈຳນວນທີ່ໄດ້ກຳນົດໄວ້ໃນໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ ຊຶ່ງແຕ່ລະຄັ້ງຕ້ອງນຳເອກະສານມາຢັ້ງຢືນນຳກົມຄຸ້ມຄອງເງິນຕາຕ່າງປະເທດ ພາຍໃນເວລາ ສາມສິບ ວັນ ນັບແຕ່ວັນທີ່ໄດ້ນຳທຶນເຂົ້າມາ ສປປ ລາວ ເປັນຕົ້ນໄປ. ສຳລັບຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບອະນຸຍາດລົງທຶນ ແລະ/ຫຼື ຂຶ້ນທະບຽນວິສາຫະກິດ ຈາກຂະແໜງການກ່ຽວຂ້ອງ ຢູ່ຂັ້ນແຂວງ ສາມາດສະເໜີຂໍການຢັ້ງຢືນນຳສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ.

ເອກະສານເພື່ອຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ມີ ດັ່ງນີ້:

1. ໃບຄຳຮ້ອງຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ແລະ ແຜນການນຳໃຊ້ທຶນ ຕາມແບບພິມຂອງທະນາຄານແຫ່ງ ສປປ ລາວ;
2. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;
3. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ);
4. ສຳເນົາໃບຢັ້ງຢືນການມອບພັນທະອາກອນປະຈຳປີຂອງປີຫຼ້າສຸດ;
5. ຫຼັກຖານການນຳທຶນເຂົ້າມາ ສປປ ລາວ ຕາມກໍລະນີ ດັ່ງນີ້:

- ນຳທຶນເຂົ້າມາ ສປປ ລາວ ໃນຮູບແບບເງິນໂອນຜ່ານລະບົບທະນາຄານ ໃຫ້ສຳເນົາໃບແຈ້ງການໂອນເງິນເຂົ້າຈາກຕ່າງປະເທດ;
- ນຳທຶນເຂົ້າມາ ສປປ ລາວ ໃນຮູບແບບເງິນສົດ ໃຫ້ສຳເນົາໃບຢັ້ງຢືນການແຈ້ງເງິນສົດຈາກເຈົ້າໜ້າທີ່ພາສີປະຈຳດ່ານ;
- ນຳທຶນເຂົ້າມາ ສປປ ລາວ ໃນຮູບແບບວັດຖຸ ໃຫ້ສຳເນົາໃບອະນຸຍາດນຳເຂົ້າສິນຄ້າ (ຖ້າມີ), ສຳເນົາໃບສັ່ງຊື້ສິນຄ້າ ແລະ ສຳເນົາໃບແຈ້ງພາສີ ເປັນລາຍລະອຽດ.

ສຳລັບຜູ້ທີ່ເຄີຍໄດ້ຮັບການຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ບໍ່ຈຳເປັນຕ້ອງປະກອບເອກະສານໃນຂໍ້ 2, 3 ແລະ 4 ຂ້າງເທິງນີ້, ເວັ້ນເສຍແຕ່ມີການປັບປຸງເນື້ອໃນເອກະສານດັ່ງກ່າວ.

**ມາດຕາ 10 ການອອກໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ ຈະພິຈາລະນາອອກໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ພາຍໃນເວລາ ຫ້າ ວັນລັດຖະການ ນັບແຕ່ວັນທີ່ໄດ້ຮັບເອກະສານປະກອບ ຢ່າງຖືກຕ້ອງ ແລະ ຄົບຖ້ວນ ເປັນຕົ້ນໄປ.

ສຳລັບຄ່າທຳນຽມເອກະສານການຢັ້ງຢືນການນຳເຂົ້າທຶນ ໃຫ້ປະຕິບັດຕາມການກຳນົດຂອງກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ.

**ມາດຕາ 11 ການນຳທຶນກັບຄືນປະເທດ**

ຜູ້ລົງທຶນຕ່າງປະເທດ ທີ່ໄດ້ຮັບໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ສາມາດນຳທຶນກັບຄືນປະເທດ ພາຍຫຼັງທີ່ໄດ້ປະຕິບັດພັນທະຕໍ່ລັດຢ່າງຄົບຖ້ວນ ເປັນຕົ້ນ ເງິນກຳໄລ, ເງິນປັນຜົນ, ທຶນທີ່ຍັງເຫຼືອຈາກການຂາຍ ຫຼື ຍຸບເລີກກິດຈະການຂອງຕົນ ດ້ວຍການໂອນຈາກບັນຊີເງິນຝາກກ່ຽວກັບການລົງທຶນ ໂດຍມີເອກະສານ ດັ່ງນີ້:

1. ໃບສະເໜີຂໍໂອນເງິນຕາມແບບພິມຂອງທະນາຄານທຸລະກິດ;
2. ສຳເນົາໜັງສືມະຕິຕົກລົງແບ່ງປັນຜົນກຳໄລ ຫຼື ເງິນປັນຜົນ ຂອງກອງປະຊຸມສະພາບໍລິຫານ ຫຼື ກອງປະຊຸມຂາຮຸ້ນ (ສຳລັບການໂອນເງິນກຳໄລ ຫຼື ເງິນປັນຜົນ);
3. ສຳເນົາໜັງສືແຈ້ງຍຸບເລີກຈາກຂະແໜງອຸດສະຫະກຳ ແລະ ການຄ້າ (ສຳລັບການໂອນທຶນທີ່ຍັງເຫຼືອຈາກການຂາຍ ຫຼື ຍຸບເລີກກິດຈະການ);
4. ສຳເນົາໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຄັ້ງຫຼ້າສຸດ;
5. ສຳເນົາໃບອະນຸຍາດລົງທຶນ ແລະ/ຫຼື ໃບທະບຽນວິສາຫະກິດ;
6. ສຳເນົາໃບອະນຸຍາດດຳເນີນທຸລະກິດ (ຖ້າມີ).

## ໝວດທີ 4
## ການໃຫ້ບໍລິການຂອງທະນາຄານທຸລະກິດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ

**ມາດຕາ 12 ເງື່ອນໄຂຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ທີ່ມີຈຸດປະສົງໃຫ້ບໍລິການກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີທະນາຄານຄູ່ຮ່ວມທຸລະກິດຢູ່ຕ່າງປະເທດ (Correspondent Bank) ເປັນທີ່ຍອມຮັບຂອງສາກົນ;
2. ມີໜ່ວຍງານຮັບຜິດຊອບຄຸ້ມຄອງການໃຫ້ບໍລິການ ກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ;
3. ມີລະບົບໂອນເງິນທາງເອເລັກໂຕຣນິກ ເພື່ອຮອງຮັບການນຳທຶນເຂົ້າ ສປປ ລາວ, ການໂອນເງິນກຳໄລ, ເງິນປັນຜົນ, ຊຳລະຕົ້ນທຶນ ແລະ ດອກເບ້ຍເງິນກູ້ ໄປຕ່າງປະເທດ ທີ່ສອດຄ່ອງກັບລະບຽບການຂອງທະນາຄານແຫ່ງ ສປປ ລາວ;
4. ເປັນສະມາຊິກ ລະບົບຊຳລະຂອງທະນາຄານແຫ່ງ ສປປ ລາວ ແລະ ສຳນັກງານປົກປ້ອງເງິນຝາກ;

5. ມີບົດແນະນຳ ແລະ/ຫຼື ຄູ່ມືທີ່ຈຳເປັນ ໃນການໃຫ້ບໍລິການກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ;

6. ມີເງື່ອນໄຂອື່ນ ຕາມການກຳນົດຂອງທະນາຄານແຫ່ງ ສປປ ລາວ ໃນແຕ່ລະໄລຍະ.

**ມາດຕາ 13 ໜ້າທີ່ຂອງທະນາຄານທຸລະກິດ**

ທະນາຄານທຸລະກິດ ທີ່ໃຫ້ບໍລິການກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ມີໜ້າທີ່ ດັ່ງນີ້:

1. ເປີດ ແລະ ປິດບັນຊີເງິນຝາກເພື່ອກະກຽມການລົງທຶນ ແລະ/ຫຼື ບັນຊີເງິນຝາກກ່ຽວກັບການລົງທຶນ ໃຫ້ຜູ້ລົງທຶນຕ່າງປະເທດ ໂດຍອີງໃສ່ການຊອກຮູ້ລູກຄ້າ ແລະ ເອກະສານຕາມທີ່ໄດ້ກຳນົດໄວ້ໃນມາດຕາ 5 ແລະ 6 ຂອງຂໍ້ຕົກລົງສະບັບນີ້ ພ້ອມທັງຮັບປະກັນບໍ່ໃຫ້ເກີດຄວາມຊໍ້າຊ້ອນຂອງການເປີດບັນຊີເງິນຝາກກ່ຽວກັບການລົງທຶນຢູ່ທະນາຄານທຸລະກິດອື່ນ ຜ່ານລະບົບທີ່ທະນາຄານແຫ່ງ ສປປ ລາວ ກຳນົດ;

2. ກວດກາຄວາມຖືກຕ້ອງຂອງທຸລະກຳ ເມື່ອມີການໂອນເງິນເຂົ້າບັນຊີເງິນຝາກກ່ຽວກັບການລົງທຶນ ແລະ ແຈ້ງຜູ້ລົງທຶນຕ່າງປະເທດ ເພື່ອສະເໜີຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 9 ຂອງຂໍ້ຕົກລົງສະບັບນີ້;

3. ກວດກາຄວາມຖືກຕ້ອງ ແລະ ຄົບຖ້ວນຂອງເອກະສານ ທີ່ກ່ຽວຂ້ອງກັບການນຳທຶນກັບຄືນປະເທດຂອງຜູ້ລົງທຶນຕ່າງປະເທດ;

4. ປະຕິເສດການໃຫ້ບໍລິການກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ຜ່ານບັນຊີເງິນຝາກປະເພດອື່ນ ທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການລົງທຶນ;

5. ບໍລິການແລກປ່ຽນເງິນຕາໃຫ້ຜູ້ລົງທຶນຕ່າງປະເທດ;

6. ເກັບກຳ, ສັງລວມ ແລະ ລາຍງານ ຂໍ້ມູນສະຖິຕິການເປີດບັນຊີເງິນຝາກກ່ຽວກັບການລົງທຶນ, ການດຳເນີນທຸລະກຳໂອນເງິນທຶນເຂົ້າ-ອອກ ສປປ ລາວ, ການແລກປ່ຽນເງິນຕາ ຂອງຜູ້ລົງທຶນຕ່າງປະເທດ ແລະ ການເຄື່ອນໄຫວອື່ນໃນບັນຊີເງິນຝາກກ່ຽວກັບການລົງທຶນ ໃຫ້ທະນາຄານແຫ່ງ ສປປ ລາວ ທຸກໆທ້າຍເດືອນ.

## ໝວດທີ 5
## ຂໍ້ຫ້າມ

**ມາດຕາ 14 ຂໍ້ຫ້າມສຳລັບຜູ້ລົງທຶນຕ່າງປະເທດ**

ຫ້າມຜູ້ລົງທຶນຕ່າງປະເທດ ມີພຶດຕິກຳ ດັ່ງນີ້:

1. ເປີດບັນຊີເງິນຝາກກ່ຽວກັບການລົງທຶນ ນຳທະນາຄານທຸລະກິດ ຊ້າກວ່າເວລາທີ່ກຳນົດ;

2. ດຳເນີນທຸລະກຳກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ຜ່ານບັນຊີເງິນຝາກປະເພດອື່ນທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການລົງທຶນ;

3. ໃຊ້ບໍລິການເງິນຕາຕ່າງປະເທດ ເປັນຕົ້ນ ແລກປ່ຽນເງິນຕາ ຫຼື ໂອນເງິນ ກັບບຸກຄົນ, ນິຕິບຸກຄົນອື່ນ ທີ່ບໍ່ໄດ້ຮັບອະນຸຍາດຈາກທະນາຄານແຫ່ງ ສປປ ລາວ;

4. ສະເໜີຂໍຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຊ້າກວ່າເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ, ບໍ່ສະເໜີຂໍຢັ້ງຢືນ ຫຼື ບໍ່ລາຍງານ ການນຳເຂົ້າທຶນຄັ້ງຜ່ານມາ ໂດຍບໍ່ມີເຫດຜົນພຽງພໍ;

5. ນຳທຶນອອກ ສປປ ລາວ ເພື່ອໄປລົງທຶນຢູ່ປະເທດທີສາມ ໂດຍບໍ່ໄດ້ຮັບອະນຸຍາດຈາກພາກສ່ວນທີ່ກ່ຽວຂ້ອງ;

6. ນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ໃນຮູບແບບເງິນສົດ ຫຼື ວັດຖຸ ໂດຍບໍ່ແຈ້ງຕໍ່ເຈົ້າໜ້າທີ່ພາສີທີ່ກ່ຽວຂ້ອງ;

7. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

**ມາດຕາ 15 ຂໍ້ຫ້າມສຳລັບທະນາຄານທຸລະກິດ**

ຫ້າມທະນາຄານທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ເປີດບັນຊີເງິນຝາກກ່ຽວກັບການລົງທຶນ ໃຫ້ແກ່ຜູ້ລົງທຶນຕ່າງປະເທດ ທີ່ມີບັນຊີເງິນຝາກດັ່ງກ່າວຢູ່ທະນາຄານທຸລະກິດອື່ນແລ້ວ;

2. ໃຫ້ບໍລິການກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ຜ່ານບັນຊີເງິນຝາກປະເພດອື່ນທີ່ບໍ່ແມ່ນບັນຊີເງິນຝາກກ່ຽວກັບການລົງທຶນ;

3. ເມີນເສີຍຕໍ່ການເກັບກຳ, ສັງລວມ ແລະ ລາຍງານ ຂໍ້ມູນສະຖິຕິການເປີດບັນຊີເງິນຝາກກ່ຽວກັບການລົງທຶນ, ການດຳເນີນທຸລະກຳໂອນເງິນທຶນເຂົ້າ-ອອກ ສປປ ລາວ, ການແລກປ່ຽນເງິນຕາ ຂອງຜູ້ລົງທຶນຕ່າງປະເທດ ແລະ ການເຄື່ອນໄຫວອື່ນໃນບັນຊີເງິນຝາກກ່ຽວກັບການລົງທຶນ ໃຫ້ທະນາຄານແຫ່ງ ສປປ ລາວ;

4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ

**ມາດຕາ 16 ການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນຜູ້ຮັບຜິດຊອບໂດຍກົງ ແລະ ເປັນເຈົ້າການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ໂດຍປະສານສົມທົບກັບສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ ແລະ ພາກສ່ວນທີ່ກ່ຽວຂ້ອງ.

**ມາດຕາ 17 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງເງິນຕາຕ່າງປະເທດ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ກົມຄຸ້ມຄອງເງິນຕາຕ່າງປະເທດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້ານະໂຍບາຍ ແລະ ນິຕິກຳ ກ່ຽວກັບການຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ເພື່ອສະເໜີຂັ້ນເທິງພິຈາລະນາ;

2. ຕິດຕາມ ກວດກາ ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານທຸລະກິດ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການເປີດ ແລະ ດຳເນີນທຸລະກຳຜ່ານບັນຊີເງິນຝາກກ່ຽວກັບການລົງທຶນ ແລະ ການແລກປ່ຽນເງິນຕາ;

3. ພິຈາລະນາອອກໜັງສືຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ແລະ ຄົ້ນຄວ້າພັດທະນາ ລະບົບການຢັ້ງຢືນການນຳທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ໃຫ້ທັນສະໄໝ; ໕

4. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມການນໍາທຶນເຂົ້າ-ອອກ ຂອງຜູ້ລົງທຶນຕ່າງປະເທດ;

5. ນໍາໃຊ້ມາດຕະການຕໍ່ຜູ້ລະເມີດຂໍ້ຕົກລົງສະບັບນີ້;

6. ສະຫຼຸບ ແລະ ລາຍງານການຄຸ້ມຄອງວຽກງານເງິນຕາຕ່າງປະເທດ ກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ໃຫ້ຂັ້ນເທິງຢ່າງເປັນປົກກະຕິ;

7. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 18 ສິດ ແລະ ໜ້າທີ່ ຂອງສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ**

ໃນການຄຸ້ມຄອງວຽກງານເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ສາຂາທະນາຄານແຫ່ງ ສປປ ລາວ ປະຈໍາພາກ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກໜັງສືຢັ້ງຢືນການນໍາທຶນເຂົ້າມາລົງທຶນໂດຍກົງຢູ່ ສປປ ລາວ ຕາມຂອບເຂດການຄຸ້ມຄອງຂອງຕົນ;

2. ຕິດຕາມ ກວດກາ ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານທຸລະກິດ ໃນການປະຕິບັດຂໍ້ຕົກລົງສະບັບນີ້ ເປັນຕົ້ນ ການເປີດ ແລະ ດໍາເນີນທຸລະກໍາຜ່ານບັນຊີເງິນຝາກກ່ຽວກັບການລົງທຶນ ແລະ ການແລກປ່ຽນເງິນຕາ ຕາມຂອບເຂດການຄຸ້ມຄອງຂອງຕົນ;

3. ແລກປ່ຽນຂໍ້ມູນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການຕິດຕາມການນໍາທຶນເຂົ້າ-ອອກ ຕາມຂອບເຂດການຄຸ້ມຄອງຂອງຕົນ;

4. ນໍາໃຊ້ມາດຕະການຕໍ່ຜູ້ທີ່ລະເມີດຂໍ້ຕົກລົງສະບັບນີ້ ຕາມຂອບເຂດການຄຸ້ມຄອງຂອງຕົນ;

5. ສະຫຼຸບ ແລະ ລາຍງານ ວຽກງານຄຸ້ມຄອງເງິນຕາຕ່າງປະເທດກ່ຽວກັບການລົງທຶນໂດຍກົງຈາກຕ່າງປະເທດ ໃຫ້ກົມຄຸ້ມຄອງເງິນຕາຕ່າງປະເທດ ໃນແຕ່ລະໄລຍະ;

6. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມການມອບໝາຍຂອງຄະນະຜູ້ວ່າການ.

## ໝວດທີ 7
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 19 ມາດຕະການສຶກສາອົບຮົມ**

ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ມີລັກສະນະເບົາ ແລະ ເປັນຄັ້ງທໍາອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງບັນທຶກເປັນລາຍລັກອັກສອນ.

**ມາດຕາ 20 ມາດຕະການປັບໃໝ**

ຜູ້ລົງທຶນຕ່າງປະເທດ ແລະ ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ກະທໍາຜິດຊໍ້າ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສໍາລັບຜູ້ລົງທຶນຕ່າງປະເທດ

1) ປັບໃໝ 10.000.000 (ສິບລ້ານ) ກີບ ສໍາລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 14 ຂໍ້ 1 ແລະ 2 ຂອງຂໍ້ຕົກລົງສະບັບນີ້;

2) ປັບໃໝ 10% (ສິບສ່ວນຮ້ອຍ) ຂອງມູນຄ່າທີ່ລະເມີດ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 14 ຂໍ້ 3 ແລະ 5 ຂອງຂໍ້ຕົກລົງສະບັບນີ້;

2. ສຳລັບທະນາຄານທຸລະກິດ: ປັບໃໝ 10.000.000 (ສິບລ້ານ) ກີບ ຕໍ່ຄັ້ງ ສຳລັບການເຄື່ອນໄຫວທີ່ເປັນການລະເມີດມາດຕາ 15 ຂອງຂໍ້ຕົກລົງສະບັບນີ້.

ສຳລັບການລະເມີດຊ້ຳໃນແຕ່ລະກໍລະນີ ຈະຖືກປັບໃໝ ສອງເທົ່າ ຂອງມູນຄ່າປັບໃໝໃນຄັ້ງຫຼ້າສຸດ.

**ມາດຕາ 21 ມາດຕະການທາງບໍລິຫານອື່ນ**

ຜູ້ລົງທຶນຕ່າງປະເທດ ທີ່ລະເມີດຂໍ້ຕົກລົງສະບັບນີ້ ໂດຍສະເພາະມາດຕາ 14 ຂໍ້ 4 ແລະ ຖືກປະຕິບັດມາດຕະການສຶກສາອົບຮົມ ແຕ່ຍັງສືບຕໍ່ກະທຳຜິດຊ້ຳ ຈະບໍ່ໄດ້ຮັບການພິຈາລະນາຢັ້ງຢືນການນຳທຶນເຂົ້າມາ ສປປ ລາວ.

ທະນາຄານທຸລະກິດ ທີ່ຖືກປະຕິບັດມາດຕະການໃນມາດຕາ 19 ມາແລ້ວ ແຕ່ຍັງມີການລະເມີດຊ້ຳ ຈະຖືກໂຈະການໃຫ້ບໍລິການເປີດບັນຊີເງິນຝາກກ່ຽວກັບການລົງທຶນ ຕາມໄລຍະເວລາທີ່ທະນາຄານແຫ່ງ ສປປ ລາວ ກຳນົດ.

## ໝວດທີ 8
## ບົດບັນຍັດສຸດທ້າຍ

**ມາດຕາ 22 ການຈັດຕັ້ງປະຕິບັດ**

ກົມຄຸ້ມຄອງເງິນຕາຕ່າງປະເທດ ເປັນເຈົ້າການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ.

ສາຂາທະນາຄານແຫ່ງ ສປປ ລາວ ປະຈຳພາກ, ທະນາຄານທຸລະກິດ, ຜູ້ລົງທຶນຕ່າງປະເທດ ແລະ ພາກສ່ວນກ່ຽວຂ້ອງ ມີໜ້າທີ່ຈັດຕັ້ງປະຕິບັດຕາມຂໍ້ຕົກລົງສະບັບນີ້ ຕາມພາລະບົດບາດຂອງຕົນ ຢ່າງເຂັ້ມງວດ.

**ມາດຕາ 23 ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດນັບແຕ່ວັນທີ່ໄດ້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນມາດຕາ 2, 5 ແລະ 7 ຂອງຂໍ້ຕົກລົງວ່າດ້ວຍການນຳທຶນ ເຂົ້າ-ອອກ ສປປ ລາວ ແລະ ການໃຫ້ກູ້ ຫຼື ຮັບເງິນກູ້ ແລະ ສິນເຊື່ອການຄ້າ ກັບຕ່າງປະເທດ ສະບັບເລກທີ 453/ທຫລ, ລົງວັນທີ 30 ພຶດສະພາ 2019.

ຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບຂໍ້ຕົກລົງສະບັບນີ້ ລ້ວນແຕ່ຖືກຍົກເລີກ.

**ຜູ້ວ່າການທະນາຄານແຫ່ງ ສປປ ລາວ**

ທະນາຄານແຫ່ງ ສປປ ລາວ
ຜູ້ວ່າການ

ບຸນເຫຼືອ ສິນໄຊວໍຣະວົງ